ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກຽມພ້ອມເພື່ອໂອກາດ ໃນສັນຍາຮ່ວມມືສອງຝ່າຍວ່າດ້ວຍການນຳໃຊ້ສະກຸນເງິນທ້ອງຖິ່ນ ກີບ - ຢວນ



ການຄ້າ ແລະ ການລົງທຶນລະຫວ່າງ ສປປ ລາວ ແລະ ສປ ຈີນ ໄດ້ມີການສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ. ເນື່ອງມາຈາກການຮ່ວມມືໃນຫຼາຍໆຂະແໜງການ ໂດຍສະເພາະທາງດ້ານເສດຖະກິດ-ການເງິນເຮັດໃຫ້ ສປປ ລາວ ແລະ ສປ ຈີນ ມີການຂະຫຍາຍຕົວທາງການຄ້າ ແລະ ການລົງທຶນຕະຫຼອດມາ. ໃນຂະນະທີ່ການລົງທຶນສ່ວນໃຫຍ່ແມ່ນມາຈາກ ສປ ຈີນ ເປັນການລົງທຶນໃນໂຄງການຂະໜາດໃຫຍ່ເປັນຕົ້ນແມ່ນ: ການສ້າງທາງລົດໄຟຄວາມໄວສູງ, ທາງດ່ວນ ແລະ ພະລັງງານໄຟຟ້າ. ຊຶ່ງການຄ້າ ແລະ ການລົງທຶນດັ່ງກ່າວໄດ້ນຳເງິນລົງທຶນທີ່ເປັນເງິນຕາຕ່າງປະເທດເຂົ້າສູ່ ສປປ ລາວ ເປັນມູນຄ່າມະຫາສານໂດຍສະເພາະແມ່ນສະກຸນເງິນຢວນ.

ປະຈຸບັນ ສປປ ລາວ ມີສາຂາທະນາຄານທຸລະກິດຈີນ ແລະ ທະນາຄານຮ່ວມທຶນລະຫວ່າງລາວ-ຈີນ ຈຳນວນ 4 ແຫ່ງ[1] ທະນາຄານດັ່ງກ່າວໄດ້ໃຫ້ບໍລິການຊຳລະສະສາງເປັນສະກຸນເງິນກີບ ແລະ ເງິນຢວນ. ຊຶ່ງຜະລິດຕະພັນທີ່ນຳໃຊ້ໃນການຊຳລະສະສາງ ຂ້າມແດນລາວ-ຈີນປະກອບມີການໂອນເງິນຜ່ານລະບົບ SWIFT ຂອງທະນາຄານທຸລະກິດ ແລະ ຜະລິດຕະພັນຊຳລະທີ່ທັນສະໄໝ ເປັນຕົ້ນແມ່ນ: ຜະລິດຕະພັນຊຳລະຜ່ານທາງບັດ UnionPay, ລະບົບຮັບຊຳລະຜ່ານທາງ Alipay, Wechat (ໃນໄລຍະທົດລອງຊຶ່ງສາມາດຮັບຊຳລະຈາກ ສປ ຈີນໄດ້ຝ່າຍດຽວ).

ສະນັ້ນ, ເພື່ອເປັນການເພີ່ມທະວີໃຫ້ທັງສອງປະເທດສືບຕໍ່ຮ່ວມມືໃນການພັດທະນາທາງດ້ານການຄ້າ ແລະ ການລົງທຶນ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດມາຮອດວັນທີ 06 ມັງກອນ 2020 ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນ ຈຶ່ງໄດ້ຕົກລົງເຊັນສັນຍາຮ່ວມມືສອງຝ່າຍວ່າດ້ວຍການນຳໃຊ້ສະກຸນເງິນທ້ອງຖິ່ນລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນຂຶ້ນ, ຊຶ່ງມີຄວາມຫວັງວ່າສັນຍາດັ່ງກ່າວຈະເປັນຈຸດລິເລີ່ມທີ່ສຳຄັນເພື່ອສົ່ງເສີມໃຫ້ທັງ 2 ປະເທດນຳໃຊ້ສະກຸນເງິນທ້ອງຖິ່ນຂອງຕົນເຂົ້າໃນການຄ້າ ແລະ ການລົງທຶນ (ໂດຍບໍ່ຜ່ານສະກຸນເງິນທີ່ສາມ) ສະນັ້ນ, ສັນຍາດັ່ງກ່າວຈະເປັນການສ້າງໂອກາດທີ່ດີໃຫ້ກັບ ສປປ ລາວ ກໍ່ຄືຜູ້ປະກອບການລາວໃນຫຼາຍໆດ້ານເປັນຕົ້ນແມ່ນ:

[1] ທະນາຄານ ICBC ສາຂາ ນະຄອນຫຼວງວຽງຈັນ, ທະນາຄານ BOC ສາຂາ ນະຄອນຫຼວງວຽງຈັນ, ທະນາຄານລາວ-ຈີນ LCNB ແລະ ທະນາຄານລາວກໍ່ສ້າງ

- ສັນຍາດັ່ງກ່າວໄດ້ເປັນການຍົກສູງພາລະບົດບາດຂອງສະກຸນເງິນກີບໃນລະບົບການເງິນລະຫວ່າງ ສປປ ລາວ ແລະ ສປ ຈີນ ແລະ ກ້າວໄປສູ່ການເປັນທີ່ຍອມຮັບໃນປະເທດຄູ່ຄ້າອື່ນໆຂອງ ສປປ ລາວ ແລະ ສປ ຈີນ ໃນອະນາຄົດເນື່ອງຈາກວ່າພາຍໃຕ້ສັນຍາດັ່ງກ່າວທາງ ສປ ຈີນ ແມ່ນຍອມຮັບສະກຸນເງິນກີບໃຫ້ເຂົ້າມາມີບົດບາດຫຼາຍຂຶ້ນໃນການຄ້າ ແລະ ການລົງທຶນຊຶ່ງໝາຍຄວາມວ່າເງິນກີບກໍ່ສາມາດເປັນເຄື່ອງມືໃນການຊຳລະລະຫວ່າງການຄ້າ ແລະ ການລົງທຶນລະຫວ່າງ ລາວ-ຈີນ ໄດ້;
- ເປັນການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນເຮັດໃຫ້ການນຳໃຊ້ເງິນກີບ ແລະ ເງິນຢວນມີບົດບາດຫຼາຍຂຶ້ນ, ເນື່ອງຈາກວ່າການຄ້າ ແລະ ການລົງທຶນສາມາດດຳເນີນຜ່ານສະກຸນເງິນທ້ອງຖິ່ນໄດ້ໂດຍກົງ ໂດຍບໍ່ຜ່ານສະກຸນເງິນທີ່ສາມ. ການຊຳລະສະສາງດ້ວຍສະກຸນເງິນທ້ອງຖິ່ນໂດຍກົງຈະຊ່ວຍໃຫ້ຫຼຸດຄວາມສ່ຽງທາງດ້ານອັດຕາແລກປ່ຽນ ແລະ ຄວາມສ່ຽງທາງດ້ານເສດຖະກິດຂອງປະເທດເຈົ້າຂອງສະກຸນເງິນ, ຊຶ່ງຈະເປັນການເພີ່ມທາງເລືອກໃຫ້ກັບຜູ້ປະກອບການໃນການດຳເນີນທຸລະກຳທາງການເງິນລະຫວ່າງປະເທດ;
- ການຊຳລະສະສາງລະຫວ່າງທະນາຄານທຸລະກິດຂອງ ສປປ ລາວ ແລະ ສປ ຈີນ ມີຄວາມສະດວກສະບາຍຫຼາຍຂຶ້ນ, ເນື່ອງຈາກວ່າໃນອານາຄົດລະບົບທະນາຄານຂອງທັງສອງປະເທດຈະຕ້ອງຮ່ວມມືເພື່ອພັດທະນາ ແລະ ສ້າງລະບົບການຊຳລະສະສາງລະຫວ່າງເງິນກີບ ແລະ ເງິນຢວນທີ່ທັນສະໄໝ ແລະ ມີການຫັກລົບບັນຊີໂດຍກົງໂດຍບໍ່ຜ່ານສະກຸນເງິນອື່ນ;
- ສົ່ງເສີມການຄ້າ ແລະ ການລົງທຶນໃຫ້ມີການຂະຫຍາຍຕົວ ແລະ ສາມາດກະຕຸກຊຸກຍູ້ຂະແໜງການອື່ນໆໃຫ້ມີຄວາມກ້າວໜ້າຍິ່ງຂຶ້ນເປັນຕົ້ນແມ່ນ: ສ້າງລາຍຮັບໃຫ້ຜູ້ປະກອບການ, ສ້າງວຽກເຮັດງານທຳ, ການພັດທະນາສີມືແຮງງານ ແລະ ອື່ນໆ.

ສະນັ້ນ, ການກະກຽມຄວາມພ້ອມຕໍ່ກັບການປ່ຽນແປງດັ່ງກ່າວຖືເປັນເລື່ອງທີ່ສຳຄັນ, ໂດຍສະເພາະຜູ້ທີ່ດຳເນີນການຄ້າ ແລະ ການລົງທຶນຮ່ວມກັບ ສປ ຈີນ, ຈະຕ້ອງໄດ້ຕິດຕາມຂ່າວສານຈາກແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ຢ່າງໃກ້ຊິດ ເພາະສັນຍາດັ່ງກ່າວເຖິງແມ່ນວ່າຈະມາພ້ອມກັບຜົນດີຫຼາຍຢ່າງ, ແຕ່ຜູ້ປະກອບການຄວນທີ່ຈະກຽມພ້ອມເພື່ອຮັບມືກັບສິ່ງທ້າທາຍທີ່ອາດຈະເກີດຂຶ້ນເຊັ່ນ: ການເຂົ້າມາຂອງເງິນທຶນທີ່ເປັນເງິນຢວນຈາກ ສປ ຈີນ ຫຼາຍຂຶ້ນ ແລະ ການຍອມຮັບການໃຊ້ເງິນກີບເຂົ້າໃນການຊຳລະສະສາງຕົວຈິງ. ສະນັ້ນ, ສິ່ງທີ່ຜູ້ປະກອບການຄວນປະຕິບັດ ແລະ ເພື່ອເຮັດໃຫ້ສັນຍານີ້ເກີດປະໂຫຍດແກ່ທຸລະກິດຂອງຕົນໃຫ້ຫຼາຍທີ່ສຸດ, ໂດຍສະເພາະຜູ້ສົ່ງອອກສິນຄ້າ ແລະ ການບໍລິການຂອງລາວຕ້ອງເປັນເຈົ້າການໃນການຮຽກເກັບຄ່າສິນຄ້າ ແລະ ການບໍລິການເປັນເງິນກີບ; ການເກັບຮັກສາ ແລະ ການນຳໃຊ້ເງິນຕາຕ່າງປະເທດຕ້ອງປະຕິບັດໃຫ້ສອດຄ່ອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢ່າງເຂັ້ມງວດ.

**# ບົດຄວາມໂດຍ: ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.**

ສາມາດສຶກສາກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດເພີ່ມເຕີມໄດ້ທີ່ນີ້:
(ໃຊ້ກ້ອງຖ່າຍຮູບໃນໂທລະສັບມືຖືເພື່ອສະແກນ QR Code)

**ກົດໝາຍ ວ່າດ້ວຍ
ການຄຸ້ມຄອງເງິນຕາຕ່າງປະເທດ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**